Country: Laos (ຊຸພູດອຍ)

ກະຊວງສຶກສາທິການ
ຂາເຂົ້າ
ເລກທີ ...
ວັນທີ ...

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

—==00==—

ສຳນັກງານນາຍົກລັດຖະມົນຕີ

ເລກທີ 237...../ນຍ

ວຽງຈັນ,ວັນທີ 21/12/98

# ດຳລັດ

## ວ່າດ້ວຍການອຸດໜູນ ແລະ ສົ່ງເສີມຄູທີ່ປະຈຳການສິດສອນ ຢູ່ເຂດພູດອຍ,ຫ່າງໄກສອກຫລີກ ແລະ ຫຍຸ້ງຍາກພິເສດ

ເຫັນຕາມ : ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບລົງວັນ ທີ 14 ສິງຫາ 1991

ເຫັນຕາມ: ມະຕິກ່ຽວກັບ ການພັດທະນາຊັບພະຍາກອນ ມະນຸດ ລົງວັນທີ 20 ກັນຍາ 1993.

ເຫັນຕາມ : 8 ແຜນງານ ບູລິມະສິດ ຂອງລັດຖະບານໂດຍສະເພາະແມ່ນແຜນງານ ພັດທະນາຊົນນະບົດ.

ເຫັນຕາມ : ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການປະຖົມສຶກສາແບບບັງຄັບ ສະບັບເລກທີ 136/ນຍ/96 ລົງວັນທີ 19/7/96,

ເຫັນຕາມ: ການສະເໜີ ຂອງລັດຖະມົນຕີ ວ່າການກະຊວງສຶກສາທິການ.

### ນາຍົກລັດຖະມົນຕີ
### ຈຶ່ງອອກດຳລັດ

ມາດຕາ 1 : ໃຫ້ປະຕິບັດລະບອບອຸດໜູນ ແກ່ຄູ ທີ່ປະຈຳການສິດສອນຢູ່ເຂດພູດອຍ, ຫ່າງໄກສອກຫລີກ ແລະ ຫຍຸ້ງຍາກພິເສດດັ່ງນີ້ :

1.1 ອຸດໜູນເງິນ ກ່ອນໄປປະຈຳການຈຳນວນເທົ່າກັບສອງເທື່ອຂອງເງິນເດືອນພື້ນຖານຕ່ຳສຸດຂອງລັດຖະກອນ

1.2. ເພີ່ມເງິນເດືອນໃຫ້ຄູທີ່ປະຈຳການສິດສອນຢູ່ແຕ່ລະເຂດດັ່ງນີ້ :

- ເຂດຫ່າງໄກສອກຫລີກ 15 %
- ເຂດພູດອຍຫ່າງໄກ 20 %
- ເຂດຫຍຸ້ງຍາກພິເສດ 25 %

1.3. ອຸດໜູນເງິນຄ່າທາງໄປແລະກັບສຳລັບຜູ້ທີ່ມາຈາກບ່ອນອື່ນເພື່ອຢາມບ້ານ ປີລະເທື່ອ

ມາດຕາດ 2: ກຳນົດ ຄຸນລັກສະນະສະເພາະ ຂອງເຂດຫ່າງໄກ ສອກຫລີກ, ເຂດພູດອຍຫ່າງໄກ ແລະ ເຂດຫຍຸ້ງຍາກ ພິເສດດັ່ງນີ້ :

2.1. ເຂດຫ່າງໄກ ສອກຫລີກ ເປັນເຂດ ດັ່ງນີ້ :

- ເມືອງທີ່ຢູ່ຫ່າງໄກຈາກທີ່ຕັ້ງຂອງແຂວງ (100 ກິໂລແມັດຂຶ້ນໄປ)
- ບໍ່ມີໄຟຟ້າ, ບໍ່ມີນ້ຳປະປາ , ບໍ່ມີຕະຫລາດຊື້ - ຂາຍ/ຕະຫລາດຊົ່ວຄາວ
- ບໍ່ມີເສັ້ນທາງລົດທີ່ແລ່ນໄດ້ຕະຫລອດປີ.
- ການເດີນທາງໄປມາ ອາໄສທາງນ້ຳ ເປັນຕົ້ນຕໍ ຫລື ຍ່າງ.
- ພາຫະນະຂົນສົ່ງ : ລົດຖີບ , ມ້າ , ກວຽນ , ເຮືອ ເປັນຕົ້ນຕໍ
- ທີ່ພັກພາອາໄສແບບປະຖົມປະຖານ /ຊົ່ວຄາວ.

2.2. ເຂດພູດອຍຫ່າງໄກ ເປັນເຂດດັ່ງນີ້ :

- ບ້ານທີ່ຢູ່ໄກຈາກຕົວເມືອງ ( 50 ກິໂລແມັດຂຶ້ນໄປ).
- ບໍ່ມີໄຟຟ້າ , ບໍ່ມີນ້ຳປະປາ , ບໍ່ມີຕະຫລາດຊື້ - ຂາຍ.
- ການເດີນທາງໄປມາ ໃຊ້ການຍ່າງເປັນຕົ້ນຕໍ / ໃຊ້ມ້າ.
- ການຜະລິດກະສິກຳນ້ອຍກະແຈກກະຈາຍ, ຊີວິດການເປັນຢູ່ຂາດເຂີນ.
- ປະຊາຊົນສ່ວນຫລາຍ ເປັນຊົນເຜົ່າ, ຮີດຄອງປະເພນີ , ພາສາແຕກຕ່າງກັນ.
- ສະພາບອາກາດບໍ່ອຳນວຍ ເຊັ່ນ : ຫນາວຫລາຍ , ລົມ , ຝົນ , ຮ້ອນ .
- ທີ່ພັກພາອາໄສ ແບບປະຖົມປະຖານ , ຊົ່ວຄາວ.

2.3 ເຂດຫຍຸ້ງຍາກພິເສດ ເປັນເຂດ ດັ່ງນີ້ :

- ມີຄຸນະລັກສະນະຕາມ ຂໍ້ 1 ຫລື 2.
- ການສຶກສາບໍ່ຂະຫຍາຍຕົວ.
- ບໍ່ມີຄວາມສະຫງົບທາງດ້ານການເມືອງ / ສັງຄົມ.
- ມີພະຍາດຕິດແປດ, ພະຍາດຫລວງ , ໄຂ້ປ່າ ........ ແລະ ອື່ນໆ.

ມາດຕາ 3: ໃຫ້ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ, ກະຊວງສຶກສາທິການ, ກະຊວງການເງິນ, ກຳແພງນະຄອນວຽງຈັນ, ແຂວງ, ເຂດພິເສດ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ດຳລັດ ສະບັບນີ້ ໃຫ້ປະກົດຜົນເປັນ ຈິງ .

ມາດຕາ 4: ດຳລັດສະບັບນີ້ ມີຜົນບັງຄັບໃຊ້ໄດ້ນັບແຕ່ວັນທີ 1/9/99 ເປັນຕົ້ນໄປ, ທຸກດຳລັດ ແລະ ຄຳສັ່ງ ທີ່ຂັດກັບດຳລັດ ສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ,

(ຄູ ພູດອຍ.)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------****-----

ກະຊວງສຶກສາທິການ ເລກທີ 260/ ສສ.ຈຕ/99

## ຄຳສັ່ງແນະນຳ

ເຖິງ : ທ່ານຫົວໜ້າພະແນກສຶກສາປະຈຳແຂວງ,ກຳແພງນະຄອນວຽງຈັນ ແລະ ເຂດພິເສດ

ເລື່ອງ: ການປະຕິບັດດຳລັດນາຍົກລັດຖະມົນຕີ ສະບັບເລກທີ 237/ ນຍ ລົງວັນທີ 21/12/98.

ເພື່ອເຮັດໃຫ້ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການອຸດໜູນ ແລະສົ່ງເສີມຄູ ທີ່ປະຈຳການສິດສອນ ຢູ່ເຂດພູດອຍ, ຫາງໄກສອກຫຼີກ ແລະ ຫຍຸ້ງຍາກພິເສດ ສະບັບເລກທີ 237/ນຍ, ລົງວັນທີ 21/12/98 ໄດ້ຮັບການປະຕິບັດ ຢ່າງຖືກຕ້ອງ ແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ;

ລັດຖະມົນຕີວ່າການກະຊວງສຶກສາທິການ ຈຶ່ງອອກຄຳສັ່ງເຖິງຫົວໜ້າພະແນກສຶກສາປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈົ່ງຈັດຕັ້ງປະຕິບັດດຳລັດນາຍົກລັດຖະມົນຕີ ສະບັບເລກທີ 237/ນຍ ລົງວັນທີ 21/12/98 ໂດຍປະຕິບັດຕາມຄຳແນະນຳດັ່ງຕໍ່ໄປນີ້:

1. ປະສານສົມທົບກັບຄະນະຈັດຕັ້ງແຂວງ ແລະ ເຈົ້າແຂວງ ເພື່ອເປັນເອກະພາບກັນໃນການກຳນົດເຂດຕ່າງໆພາຍໃນແຂວງຂອງຕົນ.
2. ກຳນົດເປົ້າໝາຍ ແລະ ຈຳນວນຜູ່ທີ່ຈະໄດ້ຮັບການອຸດໜູນໃນແຕ່ລະເຂດ.
3. ຂຶ້ນແຜນງົບປະມານການເງິນເພີ່ມເຕີມ
4. ສົ່ງລາຍຊື່ເຂດຕ່າງໆ ແລະ ແຜນງົບປະມານໃຫ້ກະຊວງສຶກສາທິການ ກ່ອນວັນທີ 31/3/99.
5. ການຈັດຕັ້ງປະຕິບັດດຳລັດດັ່ງກ່າວມີຜົນເປັນປະການໃດ ຈົ່ງໄດ້ລາຍງານໃຫ້ລັດຖະມົນຕີຊາບເປັນແຕ່ລະໄລຍະ.

ວຽງຈັນ, ວັນທີ 17 FEB 1999

ລັດຖະມົນຕີວ່າການກະຊວງສຶກສາທິການ

ບ່ອນສົ່ງ:

- ກົມຕ່າງໆ 12 ສະບັບ
- ມະຫາວິທະຍາໄລແຫ່ງຊາດ 1 ສະບັບ
- ພະແນກສຶກສາປະຈຳແຂວງ,ກຳແພງນະຄອນ ແລະ ເຂດພິເສດ 18 ສະບັບ
- ເກັບມ້ຽນ 1 ສະບັບ

ພົນນະຂອນ ເລືອງດຳມາ

Pa1 12/02/09

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------

1223.

ກະຊວງສຶກສາທິການ

ເລກທີ ສສ.ຈຕ/99

# ໃບແຈ້ງການເພີ່ມເຕີມ

ເຖິງ : ຫົວໜ້າພະແນກສຶກສາປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ

ເລື່ອງ : ການຈັດຕັ້ງປະຕິບັດ ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 237/ນຍ

ຜ່ານການຈັດຕັ້ງປະຕິບັດ ຄຳສັ່ງແນະນຳ ສະບັບເລກທີ 260/ສສ.ຈຕ/99, ລົງວັນທີ 17/2/99. ວ່າດ້ວຍການຈັດຕັ້ງປະຕິບັດດຳລັດນາຍົກລັດຖະມົນຕີ ສະບັບເລກທີ 237/ນຍ ຕໍ່ການອຸດໜູນ ແລະ ສົ່ງເສີມຄູຂຶ້ນໄປປະຈຳການສິດສອນ ຢູ່ເຂດພູດອຍ, ຫ່າງໄກສອກຫລີກ ແລະ ຫຍຸ້ງຍາກພິເສດ ເຫັນວ່າ ແຕ່ລະເຂດ ແລະ ແຂວງມີຄວາມເຂົ້າໃຈ ແລະ ສະເໜີຈັດຕັ້ງປະຕິບັດແຕກຕ່າງກັນ.

ດັ່ງນັ້ນ, ກະຊວງສຶກສາທິການ ຈຶ່ງໄດ້ແຈ້ງການເພີ່ມເຕີມໃນການປະຕິບັດດຳລັດນາຍົກລັດຖະມົນຕີ ສະບັບດັ່ງກ່າວໃຫ້ຖືກຕ້ອງທັນເວລາກັບການໄຂສົກຮຽນ 1999-2000 ດັ່ງຕໍ່ໄປນີ້ :

1. ການອຸດໜູນເງິນກ່ອນໄປປະຈຳການແມ່ນເບີກຈ່າຍສະເພາະໃຫ້ແຕ່ຜູ້ໄປປະຈຳການໃໝ່ເທົ່ານັ້ນໃນຈຳນວນເງິນເດືອນຕ່ຳສຸດຂອງລັດຖະກອນ 50.000 ກີບ x 2 = 100.000 ກີບ, ສ່ວນຜູ້ໄປປະຈຳການກ່ອນແລ້ວໃນສົກຮຽນຜ່ານມາແມ່ນບໍ່ໃຫ້ເບີກຈ່າຍອີກ.
2. ການເພີ່ມເງິນອຸດໜູນໃຫ້ຄູ ແລະ ພະນັກງານທີ່ສັງກັດຢູ່ແຕ່ລະເຂດນັ້ນໃຫ້ຄິດໄລ່ເອົາເງິນເດືອນທັງໝົດຂອງຜູ້ກ່ຽວທີ່ໄດ້ຮັບຕາມບັນຊີເງິນເດືອນ (ເງິນເດືອນພື້ນຖານຕາມຂັ້ນ-ຂັ້ນ, ເງິນອາຍຸການ, ເງິນຕຳແໜ່ງ ຫລື ເງິນອຸດໜູນຄູສອນ, ເງິນທາດເບື່ອ, ເງິນລູກ, ເງິນເມຍ ແລະ ເງິນເສຍອົງຄະທີ່ໄດ້ຫັກເງິນປະກັນສັງຄົມ ແລະ ອາກອນເງິນເດືອນ) ມາຄູນກັບເປີເຊັນເພີ່ມແຕ່ລະເຂດ (15%, 20% ແລະ 25%).
   ຕົວຢ່າງ : ຫົວໜ້າພະແນກສຶກສາປະຈຳແຂວງແຕ່ງຕັ້ງ ທ່ານ ກ ຄູຊັ້ນປຣິນຍາຕີໄປເປັນຫົວໜ້າໂຮງຮຽນປະຖົມສົມບູນຢູ່ເຂດພູດອຍຫ່າງໄກ (2.2) ໄດ້ຮັບເງິນເດືອນຕົວຈິງທີ່ເຫລືອຈາກການຫັກອອກເງິນປະກັນໄພສັງຄົມ ແລະ ອາກອນເງິນເດືອນແລ້ວແມ່ນ 173.980 ກີບ. ດັ່ງນັ້ນ, ການຄິດໄລ່ເງິນອຸດໜູນເພີ່ມໃຫ້ປະຕິບັດດັ່ງນີ້ :

- ເງິນອຸດໜູນເພີ່ມ = $\frac{173.980 \times 20}{100}$ = 34.796 ກີບ

- ເງິນເດືອນທັງໝົດ = 173.980 ກີບ + 34.796 = 208.776 ກີບ

3. ເງິນຄ່າເດີນທາງໄປ ແລະ ກັບສຳລັບການໄປຢາມຄອບຄົວໃນຍາມພັກປີຮຽນ ແມ່ນໃຫ້ແກ້ໄຂປີລະເທື່ອໂດຍການຄິດໄລ່ຕາມຄ່າໂດຍສານປົກກະຕິຂອງທາງບົກ, ທາງນ້ຳ (ເຮືອແລະຂົວ) ແລະ ທາງອາກາດ. ສ່ວນຄ່າອາຫານ ແລະ ພັກເຊົາແມ່ນກຸ້ມຕົນເອງ.
4. ຜູ້ໄດ້ຮັບການອຸດໜູນທີ່ຢູ່ແຕ່ລະເຂດປະກອບດ້ວຍ : ຄູສອນທົ່ວໄປ, ຄູກຳລັງເຝິກງານ, ຄູສັນຍາຈ້າງ ແລະ ພະນັກງານບໍລິຫານ ທີ່ພວມເຮັດວຽກຢູ່ແຕ່ລະເຂດ.

- ການອຸດໜູນເງິນໃຫ້ຄູສັນຍາຈ້າງຕ້ອງປະຕິບັດຕາມດຳລັດ 97/ນຍ ເປັນຫລັກ, ການອຸດໜູນເພີ່ມໃຫ້ຄິດໄລ່ຕາມລະບອບການອຸດໜູນທີ່ໄດ້ກຳນົດໃນດຳລັດ ສະບັບເລກທີ່ 237/ນຍ, ຫລື ຖ້າມີການປ່ຽນແປງເງິນເດືອນສັນຍາຈ້າງກໍ່ຈະໄດ້ຄິດໄລ່ຕາມຫລັກການລຸ່ມນີ້:

<u>ຕົວຢ່າງ</u> : ທ່ານ ສົມຈິດ <u>ຄູຊັ້ນຕົ້ນ</u> ເປັນຄູສັນຍາຈ້າງ ສະໝັກໄປສອນຢູ່ເຂດຫຍຸ້ງຍາກພິເສດ (2.3). ຕ້ອງຄິດໄລ່ເງິນອຸດໜູນ ດັ່ງນີ້ :

1). ໃຫ້ຄິດໄລ່ເງິນອຸດໜູນກ່ອນໄປປະຈຳການ ຕາມຂັ້ນຕ່ຳສຸດຂອງສັນຍາຈ້າງ

35.000 ກີບ x 2 = 70.000 ກີບ

2). ການຄິດໄລ່ເງິນອຸດໜູນສັນຍາຈ້າງ

+ ສຳລັບຄູສັນຍາຈ້າງຊັ້ນຕົ້ນ : $\frac{35.000 \times 25}{100}$ 9.250 ກີບ

ເງິນເດືອນທັງໝົດ 35.000 + 9250 44.250 ກີບ

+ ສຳລັບຄູສັນຍາຈ້າງຊັ້ນກາງ : $\frac{40.000 \times 25}{100}$ = 10.000 ກີບ

ເງິນເດືອນທັງໝົດ 40.000 + 10.000 = 50.000 ກີບ

+ ສຳລັບຄູສັນຍາຈ້າງຊັ້ນສູງ ແລະ ປະລິນຍາຕີ : $\frac{45.000 \times 25}{100}$ = 11.250 ກີບ

ເງິນເດືອນທັງໝົດ 45.000 + 11.250 56.250 ກີບ

ການກຳນົດເຂດແມ່ນໃຫ້ພິຈາລະນາຕາມມາດຕາ 2 ຂອງດຳລັດ 237/ນຍ ທີ່ວ່າແຂວງຂອງຕົນມີຄູ ແລະ ພະນັກງານ ຢູ່ແຕ່ລະເຂດ ມີຈັກໂຮງຮຽນ ຫລື ຈັກກຸ່ມ ແລະ ຈຳນວນຄູຈັກຄົນ; ຫ້ອງການສຶກສາປະຈຳເມືອງເທົ່າໃດ ແລະ ມີພະນັກງານເທົ່າໃດ ? ແລ້ວຂື້ນແຜນງົບປະມານການເງິນລະອຽດກັບແຂວງ.

5. ກະຊວງສຶກສາທິການ ມອບສິດໃຫ້ພະແນກສຶກສາປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ສົມທົບກັບ ທ່ານເຈົ້າແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເພື່ອຄົ້ນຄ້ວາ, ຕົກລົງກຳນົດເຂດຕາມດຳລັດນາຍົກລັດຖະມົນຕີ 237/ນຍ ພາຍຫລັງທີ່ໄດ້ເຊັນຮັບຮອງຈາກ ທ່ານເຈົ້າແຂວງແລ້ວ ໃຫ້ລາຍງານໄປຍັງກະຊວງສຶກສາຊາບ ແລະ ຮີບຮ້ອນຈັດຕັ້ງປະຕິບັດໃນສົກຮຽນ 1999-2000 (ລະອຽດມີຕາຕະລາງເກັບກຳຂໍ້ມູນຂັດຕິດມາພ້ອມນີ້ ? ແລະ ໃນແຕ່ລະປີຕ້ອງມີການກວດກາຄືນເງື່ອນໄຂແຕ່ລະເຂດມີການປ່ຽນແປງຢູ່ໃນລະດັບໃດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດ.

ວຽງຈັນ, ວັນທີ 1/9/99

ທ. ລັດຖະມົນຕີ ຜູ້ວ່າການກະຊວງສຶກສາທິການ

ລັດຖະມົນຕີຊ່ວຍວ່າການ